# ວັນໄປສະນີໂລກ 9 ຕຸລາ 2024

**ຖະແຫຼງການຂອງເລຂາທິການໃຫຍ່ ສະຫະພາບໄປສະນີສາກົນ Masahiko METOKI**
**“ຄົບຮອບ 150 ປີ ແຫ່ງການເປີດນາໃຊ້ການສື່ສານ ແລະ ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ປວງຊົນໃນທົ່ວໂລກ”**

ໃນຂະນະທີ່ພວກເຮົາສະເຫຼີມສະຫຼອງ ຄົບຮອບ 150 ປີ ຂອງສະຫະພາບໄປສະນີສາກົນ UPU, ພວກເຮົາໄດ້ຮັບຮູ້ເຖິງຄວາມສຳຄັນຂອງສະຫະພາບ ໃນຖານະທີ່ເປັນໜຶ່ງໃນຕົວຢ່າງທຳອິດຂອງລັດທິພະຫຸພາຄີ. ສະຫະພາບໄປສະນີສາກົນສ້າງຕັ້ງຂຶ້ນດ້ວຍເປົ້າໝາຍໃນການສ້າງລະບົບໄປສະນີທີ່ເປັນໜຶ່ງດຽວ ແລະ ໄດ້ນຳເອົາບັນດາປະເທດສະມາຊິກລວມເຂົ້າດ້ວຍກັນ ເພື່ອສະໜັບສະໜູນການສື່ສານ ລະດັບໂລກ, ການແລກປ່ຽນວັດທະນະທຳ ແລະ ການເຂົ້າເຖິງການບໍລິການທີ່ຈຳເປັນ. ສະຫະພາບໄປສະນີສາກົນ ກ່ອນໜ້ານີ້ ມີສະມາຊິກ ພຽງແຕ່ 22 ປະເທດ ມາເຖິງປະຈຸບັນມີເຖິງ 192 ປະເທດ ເຊິ່ງສະແດງໃຫ້ເຫັນເຖິງຄວາມເຂັ້ມແຂງຂອງການຮ່ວມມືລະຫວ່າງປະເທດໃນຂະແໜງໄປສະນີ.

ຕະຫຼອດຫຼາຍປີທີ່ຜ່ານມາ UPU ໄດ້ພະຍາຍາມປັບຕົວໃຫ້ທັນກັບສິ່ງທ້າທາຍຕ່າງໆທີ່ເກີດຂຶ້ນ ເຊັ່ນ: ສົງຄາມ, ວິກິດການທາງເສດຖະກິດ ແລະ ການປ່ຽນແປງທາງດ້ານເຕັກໂນໂລຊີທີ່ກ້າວກະໂດດ, ສະຫະພາບໄປສະນີສາກົນ ຍັງເປັນສັນຍາລັກທີ່ເຂັ້ມແຂງຂອງຄວາມສາມັກຄີລະດັບໂລກ, ໂດຍຮັບປະກັນວ່າ ທຸກຄົນ ສາມາດເຂົ້າເຖິງການສື່ສານໄດ້ໂດຍສະເພາະແມ່ນກຸ່ມຄົນທີ່ດ້ອຍໂອກາດ.

ໃນປະຈຸບັນ UPU ຈຶ່ງພະຍາຍາມປັງປຸງ ແລະ ພັດທະນາການບໍລິການໄປສະນີ ເຮັດໃຫ້ແຕ່ລະປະເທດສາມາດແລກປ່ຽນຄວາມຮູ້, ຄົ້ນຫາວິທີການແກ້ໄຂຮູບແບບໃໝ່ ແລະ ຮັບມືກັບສິ່ງທ້າທາຍທີ່ທັນສະໄໝ. ເຊິ່ງຄວາມຫວັງໃນການຮ່ວມມືຂອງ UPU ແມ່ນເພື່ອຊ່ວຍປ່ຽນວິກິດໃຫ້ເປັນໂອກາດ ເຮັດໃຫ້ການບໍລິການໄປສະນີ ມີການພັດທະນາໃຫ້ທັນກັບການປ່ຽນແປງຂອງໂລກ.

ໃນເມື່ອກ່ອນ ເຮົາອາດຈະຄິດວ່າ ການເພີ່ມຂຶ້ນຂອງການຕິດຕໍ່ສື່ສານໃນຮູບແບບດິຈິຕອນ ແລະ ການຫຼຸດລົງຂອງບໍລິມາດເຄື່ອງຝາກໄປສະນີແບບດັ່ງເດີມ ແມ່ນເປັນອຸປະສັກໜຶ່ງທີ່ສຳຄັນຕໍ່ຂະແໜງໄປສະນີ, ແຕ່ປະຈຸບັນພວກເຮົາເຫັນວ່າສິ່ງເຫຼົ່ານັ້ນແມ່ນເປັນໂອກາດຫຼາຍກວ່າ. ເຊິ່ງເຄືອຂ່າຍຂອງ UPU ໄດ້ມີການປັບຕົວ ເພື່ອຊຸກຍູ້ສົ່ງເສີມການບໍລິການໃຫ້ມີຄວາມຫຼາກຫຼາຍຂຶ້ນ ເຊັ່ນ: ການຄ້າເອເລັກໂຕຣນິກ, ການບໍລິການດ້ານການເງິນ, ການບໍລິການສັງຄົມ ແລະ ການບໍລິການແບບດິຈິຕອນ ເພື່ອເຮັດໃຫ້ຜູ້ຄົນໃນທົ່ວໂລກ ລວມທັງເຂດຫ່າງໄກສອກຫຼີກ ສາມາດເຂົ້າເຖິງການບໍລິການໄປສະນີໄດ້ຢ່າງສະດວກ ແລະ ທົ່ວເຖິງ.

ໂດຍທົ່ວໄປແລ້ວ ເຮົາຈະຄິດວ່າ ການແຂ່ງຂັນເປັນສິ່ງທີ່ທ້າທາຍ ແຕ່ສຳລັບ UPU ແລ້ວແມ່ນມີຄວາມຍິນດີທີ່ຈະສ້າງຄູ່ຮ່ວມພັນທະມິດກັບຫຼາຍພາກສ່ວນ ເຊິ່ງນັ້ນຈະເປັນການເປີດກວ້າງ ໃນການເສີມສ້າງຄວາມອາດສາມາດຂອງພວກເຮົາຕໍ່ກັບສິ່ງທ້າທາຍຕ່າງໆໃນໂລກ ເຊັ່ນດຽວກັນກັບສະພາບການປ່ຽນແປງຂອງດິນຟ້າອາກາດ ເຊິ່ງຈຳເປັນຈະຕ້ອງມີການຮ່ວມມືລະຫວ່າງປະເທດ ໃນການແກ້ໄຂບັນຫາດັ່ງກ່າວ.

ເມື່ອເຮົາເບິ່ງໄປຍັງອານາຄົດ, ພາລະກິດຂອງ UPU ຍັງຄົງຊັດເຈນ ນັ້ນກໍ່ຄື ການເຊື່ອມໂຍງ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ປວງຊົນໃນທົ່ວໂລກ ດ້ວຍຄວາມມຸ່ງໝັ້ນ ຕໍ່ການຮ່ວມມືພະຫຸພາຄີ, ນະວັດຕະກຳ ແລະ ຄວາມຄຸມໄປທົ່ວໂລກ ເຊິ່ງ UPU ຈະຕ້ອງສືບຕໍ່ຊຸກຍູ້ ແລະ ສົ່ງເສີມການຕິດຕໍ່ສື່ສານລະດັບໂລກ ແລະ ສະໜອງການບໍລິການໃຫ້ແກ່ກຸ່ມຄົນຍຸກໃໝ່ ໃນອີກ 150 ປີ ຕໍ່ໜ້າ.